ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ ເລກທີ 04 /ສພຂ

ໄຊຍະບູລີ, ວັນທີ 16 ກຸມພາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023

- ອີງຕາມ ລັດຖະທຳມະນູນແຫ່ງ ສປປລາວ ສະບັບປັບປຸງ ປີ 2015 ມາດຕາ 77;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ແລະ ມາດຕາ 59;
- ອີງຕາມ ບົດລາຍງານ ຂອງອົງການປົກຄອງແຂວງ ໃນກອງປະຊຸມ ຄັ້ງວັນທີ 8 ກຸມພາ 2023.

ຜ່ານການຮັບຟັງ ການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການຕິດຕາມກວດກາ ແລະ ການຄົ້ນຄວ້າ, ປະກອບຄຳຄິດ, ຄຳເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມ ສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

### ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ປະຈຳປີ 2022**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ແລະ ເຫັນດີຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປີ 2022 ສາມາດປະຕິບັດສຳເລັດໄດ້ຫລາຍຄາດໝາຍ, ທີ່ພົ້ນເດັ່ນ ແມ່ນຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ເສດຖະກິດສືບຕໍ່ ຂະຫຍາຍຕົວ ບັນລຸໄດ້ 4,9%, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍໂດຍພື້ນຖານ. ພ້ອມນັ້ນ, ຄາດໝາຍທາງດ້ານເສດຖະກິດຂອງບັນດາຂະແໜງການຫຼາຍຄາດໝາຍປະຕິບັດໄດ້ລື່ນແຜນການ ເປັນຕົ້ນ ການຜະລິດກະສິກຳຂອງປະຊາຊົນ ແລະ ພາກທຸລະ



ສແກນດ້ວຍ CamScanner

ກິດ ເປັນຂະບວນການຢ່າງກວ້າງຂວາງ ເຮັດໃຫ້ການສົ່ງອອກປະຕິບັດໄດ້ 113,09 ລ້ານໂດລາສະຫະລັດ; ປະຕິບັດລາຍຮັບໄດ້ທັງໝົດ 1.197,84 ຕື້ກີບ; ການລົງທຶນປະຕິບັດໄດ້ 2.903,14 ຕື້ກີບ. ການຈັດຕັ້ງປະຕິບັດ 7 ວຽກງານຈຸດສຸມເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 2 ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023**

ກອງປະຊຸມເຫັນດີ ເປັນເອກະພາບຕໍ່ບັນດາເນື້ອໃນທີ່ໄດ້ກຳນົດໄວ້ຢູ່ ໃນທິດທາງລວມ, ຄາດໝາຍ ແລະ ວຽກງານຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023 ຕາມການສະເໜີ ຂອງອົງການປົກຄອງແຂວງ, ສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດຕາມ 7 ວຽກງານຈຸດສຸມເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ບັນດາໜ້າວຽກຈາດສຸມຂອງຂະແໜງການຮອດປີ 2023 ພ້ອມທັງຮັບຮອງເອົາບັນດາຄາດໝາຍແຕ່ລະດ້ານ ດັ່ງນີ້:

**1. ຄາດໝາຍດ້ານເສດຖະກິດມະຫາພາກ**

**1.1 ຄາດໝາຍດ້ານການເຕີບໂຕເສດຖະກິດ**

ຄາດຄະເນການເຕີບໂຕເສດຖະກິດຂອງແຂວງ ຈະຂະຫຍາຍຕົວຢູ່ໃນລະດັບ 5% ແລະ ລວມຍອດຜະລິດຕະພັນພາຍໃນ (GDP) 14.963 ຕື້ກີບ, ສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ 2.081 ໂດລາສະຫະລັດ ຫຼື 35,38 ລ້ານກີບ (ອັດຕາແລກປ່ຽນ 1ໂດລາ=17.000 ກີບ); ໂຄງປະກອບເສດຖະກິດຂອງແຂວງ ໃນປີ 2023 ຂະຫຍາຍຕົວໃນອັດຕາສ່ວນ ດັ່ງນີ້:

- ຂະແໜງກະສິກຳຄາດວ່າຈະຂະຫຍາຍຕົວ 3% ກວມເອົາ 26% ຂອງ GDP;
- ຂະແໜງອຸດສະຫະກຳຄາດວ່າຈະຂະຫຍາຍຕົວ 8,7% ກວມເອົາ 38% ຂອງ GDP;
- ຂະແໜງການບໍລິການຄາດວ່າຈະຂະຫຍາຍຕົວ 3,7% ກວມເອົາ 36% ຂອງ GDP;

**1.2 ດ້ານງົບປະມານ**

- ດ້ານລາຍຮັບ: ຄາດຄະເນການເກັບລາຍຮັບເຂົ້າງົບປະມານ ທັງໝົດໃຫ້ໄດ້ 1.514,74 ຕື້ກີບ, ໃນນັ້ນ: ລາຍຮັບສູນກາງ 1.010,00 ຕື້ກີບ ແລະ ລາຍຮັບທ້ອງຖິ່ນ 504,74 ຕື້ກີບ;
- ດ້ານລາຍຈ່າຍ: ຄາດຄະເນການຄຸ້ມຄອງຄອງລາຍຈ່າຍທັງໝົດ ໃຫ້ຢູ່ໃນລະດັບ 520,11 ຕື້ກີບ;
- ດຸ່ນດ່ຽງງົບປະມານ: ຄາດຄະເນການຂາດດຸນງົບປະມານ 15,37 ຕື້ກີບ.

**1.3 ດ້ານແຫຼ່ງທຶນເພື່ອການພັດທະນາ**

ຄວາມຕ້ອງການທຶນລວມທັງໝົດ 3.740 ຕື້ກີບ, ເທົ່າກັບ 25% ຂອງ GDP ໃນນີ້:

- ຈາກງົບປະມານພາຍໃນ ປະມານ 150 ຕື້ກີບ, ກວມເອົາ 4,01% ຂອງການລົງທຶນທັງໝົດ;
- ຈາກການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ (ODA) ປະມານ 410 ຕື້ກີບ, ກວມເອົາ 10,96% ຂອງການລົງທຶນທັງໝົດ;
- ຈາກການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ປະມານ 2.290 ຕື້ກີບ, ກວມເອົາ 61,23% ຂອງການລົງທຶນທັງໝົດ;
- ຈາກສິນເຊື່ອຂອງທະນາຄານ ປະມານ 890 ຕື້ກີບ, ກວມເອົາ 23,8% ຂອງການລົງທຶນທັງໝົດ

**2. ຄາດໝາຍດ້ານເສດຖະກິດບັນດາຂະແໜງການ**



Scanned with CamScanner

**2.1 ກະສິກຳ ແລະ ປ່າໄມ້**

- ສູ້ຊົນຜະລິດເຂົ້າບໍ່ໃຫ້ຫຼຸດ 189.000 ໂຕນ;
- ສູ້ຊົນປູກພືດສະບຽງໃຫ້ໄດ້ 159.000 ໂຕນ;
- ສູ້ຊົນປູກພືດເປັນສິນຄ້າໃຫ້ໄດ້ຜົນຜະລິດ 2.100.000 ໂຕນ;
- ສູ້ຊົນໃຫ້ຝູງສັດລ້ຽງຂະຫຍາຍຕົວ ໃນລະດັບ ສະເລ່ຍ 7% ຕໍ່ປີ;
- ຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 23.553 ໂຕນ, ສະເລ່ຍບໍ່ໃຫ້ຫຼຸດ 55 ກິໂລ/ຄົນ/ປີ;
- ສູ້ຊົນຜະລິດສັດເປັນສິນຄ້າ ທັງພາຍໃນ ແລະ ສົ່ງອອກໄປຕ່າງແຂວງ ໄດ້ 33.800 ໂຕ;
- ສູ້ຊົນປູກໄມ້ໃຫ້ໄດ້ 3.560 ເຮັກຕາ ແລະ ຟື້ນຟູປ່າໃຫ້ໄດ້ 23.100 ເຮັກຕາ;
- ສູ້ຊົນປູກໄມ້ໃຫ້ໄດ້ 3.560 ເຮັກຕາ ແລະ ຟື້ນຟູປ່າໃຫ້ໄດ້ 23.100 ເຮັກຕາ; ຂຶ້ນທະບຽນສວນປູກໃຫ້ໄດ້ 1.600 ເຮັກຕາ.
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**2.2 ອຸດສາຫະກຳ ແລະ ການຄ້າ**

- ສູ້ຊົນເຮັດໃຫ້ລວມຍອດມູນຄ່າການຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 242,46 ຕື້ກີບ ແລະ ມູນຄ່າການຈຳໜ່າຍຜະລິດຕະພັນດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 285,05 ຕື້ກີບ;
- ສູ້ຊົນເຮັດໃຫ້ມູນຄ່າສົ່ງອອກສິນຄ້າໄປຕ່າງປະເທດໃຫ້ບັນລຸ 121,01 ລ້ານໂດລາ;
- ຄຸ້ມຄອງການນຳເຂົ້າສິນຄ້າຈາກຕ່າງປະເທດບໍ່ໃຫ້ເກີນ 119,10 ລ້ານໂດລາ;
- ຊຸກຍູ້ໃຫ້ມູນຄ່າການຈໍລະຈອນສິນຄ້າພາຍໃນໃຫ້ຂະຫຍາຍຕົວ 2% ຂຶ້ນໄປ;
- ເອົາໃຈໃສ່ຕິດຕາມ, ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫລາດບໍ່ໃຫ້ເໜັງຕີງເກີນ 12% ຂອງລາຄາສິນຄ້າໃນປັດຈຸບັນ;
- ສູ້ຊົນສ້າງໜຶ່ງເມືອງໜຶ່ງຜະລິດຕະພັນໃຫ້ໄດ້ 2 ຜະລິດຕະພັນຂຶ້ນໄປ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**2.3 ພະລັງງານ ແລະ ບໍ່ແຮ່**

- ສືບຕໍ່ ຊຸກຍູ້ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຮຸ່ງ1 ໃຫ້ສຳເລັດ ແລະ ດຳເນີນການຜະລິດຂາຍໄຟເປັນທາງການ ໃນຕົ້ນປີ 2023;
- ສືບຕໍ່ປັບປຸງລະບົບຕາຂ່າຍໄຟຟ້າ 22 kV ແລະ ສະຖານີຍ່ອຍ ເພື່ອໃຫ້ລະບົບມີຄວາມສະຖຽນລະພາບ ສະໜອງພະລັງງານໃຫ້ຜູ້ຊົມໃຊ້ພຽງພໍ ແລະ ທົ່ວເຖິງ;
- ສູ້ຊົນ ເຮັດໃຫ້ໜີ້ສິນ ຄ່າກະແສໄຟຟ້າ ສາທາລະນະ (ຄ່າກະແສໄຟຟ້າເຍືອງທາງ) ຫຼຸດນ້ອຍລົງ ແລະ ປັບປຸງລະບົບຖານຂໍ້ມູນດ້ານພະລັງງານ;
- ສູ້ຊົນ ຜະລິດກະແສໄຟຟ້າ ໃຫ້ໄດ້ 202,78 ລ້ານກິໂລວັດໂມງ, ມູນຄ່າ 175,17 ຕື້ກີບ ແລະ ສູ້ຊົນຈຳໜ່າຍກະແສໄຟຟ້າ ພາຍໃນ 188,62 ລ້ານກິໂລວັດໂມງ ມູນຄ່າ 126,91 ຕື້ກີບ;
- ສືບຕໍ່ຊຸກຍູ້ຕິດຕາມ ບັນດາບໍລິສັດ ທີ່ຂຸດຄົ້ນ ແລະ ສົ່ງອອກແຮ່ (ແບບທົດລອງ) ຢູ່ພາຍໃນແຂວງ ຈຳນວນ 5 ໂຄງການໃຫ້ ໄດ້ປະຕິບັດໄປຕາມແຜນ;
- ສູ້ຊົນ ຜະລິດຫີນປູນ ໃຫ້ໄດ້ 300.000 ແມັດກ້ອນ, ມູນຄ່າ 18 ຕື້ກີບ;
- ຄາດຄະເນການຈຳໜ່າຍຫີນປູນໃຫ້ໄດ້ 26,5 ຕື້ກີບ, ໃນນັ້ນ: ຈຳໜ່າຍພາຍໃນ 50.000 ແມັດກ້ອນ, ມູນຄ່າ 4 ຕື້ກີບ ແລະ ອອກຕ່າງປະເທດ 250.000 ແມັດກ້ອນ, ມູນຄ່າ 22,5 ຕື້ກີບ;



CamScanner

- ສຸມໃສ່ຈັດຕັ້ງປະຕິບັດ 8 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**2.4 ໂຍທາທິການ ແລະ ຂົນສົ່ງ**

- ສືບຕໍ່ປັບປຸງເສັ້ນທາງຫຼວງແຫ່ງຊາດ ໃຫ້ມີຄວາມລຶງລ່ຽນ ເຊື່ອມໂຍງ-ເຊື່ອມຈອດກັບບັນດາແຂວງ ແລະ ປະເທດໃກ້ຄຽງ ແລະ ແລວເສດຖະກິດທາງລົດໄຟ ໃຫ້ມີປະສິດທິຜົນ, ປອດໄພ, ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນໃນການຜະລິດພາຍ ໃນປະເທດ ແລະ ສົ່ງອອກ, ສະໜັບສະໜູນໃຫ້ເສດຖະກິດມະຫາພາກຂະຫຍາຍຕົວຢ່າງໝັ້ນທ່ຽງ;
- ສືບຕໍ່ປັບປຸງທາງຫຼວງທ້ອງຖິ່ນ ມີຄວາມສະດວກໃນການຂົນສົ່ງສິນຄ້າ ຫາເສັ້ນທາງຫຼວງແຫ່ງຊາດ ເພື່ອສົ່ງ ສິນຄ້າໄປຫາແລວເສດຖະກິດທາງລົດໄຟ;
- ສືບຕໍ່ປັບປຸງລະບົບການຂົນສົ່ງຜ່ານແດນ ໂດຍພັດທະນາຈຸດພັກຄ່ຽນສິນຄ້າຢູ່ດ່ານສາກົນ;
- ສືບຕໍ່ກຳນົດສ້າງຈຸດຄ່ຽນຖ່າຍການຂົນສົ່ງສິນຄ້າກະສິກຳ ຊຸມເຊື່ອມທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ, ບໍລິມາດຂົນສົ່ງໃຫ້ເພີ່ມຂຶ້ນ 10-12%;
- ສືບຕໍ່ກຳນົດຈຸດຄ່ຽນຖ່າຍສິນຄ້າ ລະຫວ່າງຈຸດພາຍໃນເທດສະບານແຂວງ ຫາ ແຂວງອ້ອມຂ້າງ ແລະ ປະເທດໃກ້ຄຽງ;
- ສືບຕໍ່ແກ້ໄຂການນຳໃຊ້ທີ່ດິນສາທາລະນະ ໃຫ້ຖືກຕ້ອງຕາມການກຳນົດຂອງຜັງເມືອງ ເທດສະບານແຂວງ ໄຊຍະບູລີ;
- ສືບຕໍ່ການແກ້ໄຂບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ ທີ່ຈັດຕັ້ງປະຕິບັດທີ່ຫຼ້າຊ້າ, ບໍ່ປະຕິບັດຕາມສັນຍາ;
- ການຄຸ້ມຄອງໜີ້ສິນຂອງໂຄງການກໍ່ສ້າງພື້ນຖານໂຄງລ່າງ ຈຳກັດການຈັດຕັ້ງປະຕິບັດໂຄງການໃໝ່ທີ່ບໍ່ຈຳເປັນເພື່ອຫຼຸດຜ່ອນໜີ້ສິນ;
- ແກ້ໄຂບັນຫາຜົນກະທົບຂອງເສັ້ນທາງຫຼວງທີ່ເກີດຈາກການບຸກລຸກຂອງສັງຄົມ ທີ່ເປັນການລະເມີດກົດໝາຍທາງຫຼວງ.
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**2.5 ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

- ສູ້ຊົນເຜີຍແຜ່ແຜນ ແລະ ເຊື່ອມສານແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານ ຂັ້ນແຂວງ ໃຫ້ໄດ້ 11 ເມືອງ, ຈັດສັນທີ່ດິນຂັ້ນເມືອງ 2 ເມືອງ, ຈັດສັນທີ່ດິນຂັ້ນບ້ານ 30 ບ້ານ;
- ຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝ ໃຫ້ໄດ້ 7.000 ຕອນ, ເກັບກຳຂໍ້ມູນໂຕເລກສຳມະໂນພາສີທີ່ດິນໃຫ້ເພີ່ມຂຶ້ນ 600 ຕອນ, ແລະ ປະເມີນຄືນການຈັດສັນທີດິນ 8 ປະເພດ ຂັ້ນບ້ານໃຫ້ໄດ້ 63 ບ້ານ ແລະ ປັບປຸງແຜນທີ່ເຂດປະເມີນລາຄາທີ່ດິນໃນທົ່ວແຂວງ;
- ສູ້ຊົນສ້າງບ້ານ ຂຽວ, ສະອາດ, ງາມຕາ ທົ່ວແຂວງ ໃຫ້ໄດ້ 40 ບ້ານ ແລະ ອອກໃບຢັ້ງຢືນສິ່ງແວດລ້ອມໃຫ້ໄດ້ 420 ຫົວໜ່ວຍ;
- ສູ້ຊົນສ້າງຕັ້ງຄະນະກຳມະການຄຸ້ມຄອງອ່າງຮັບນ້ຳ ຂັ້ນເມືອງໃຫ້ໄດ້ 1 ອ່າງ, ສຶກສາສະພາບລວມອ່າງຮັບນ້ຳໃຫ້ ໄດ້ 1 ອ່າງ, ສ້າງແຜນຄຸ້ມຄອງອ່າງຮັບນ້ຳທີ່ເປັນບູລິມະສິດໃຫ້ໄດ້ 1 ອ່າງ, ຕິດຕາມ



ສະແກນດ້ວຍ CamScanner

ກວດກາຄຸນນະພາບນ້ຳໃຫ້ໄດ້ 28 ຈຸດ, ອອກໃບອະນຸຍາດການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳໃຫ້ໄດ້ 10 ຫົວໜ່ວຍ;

- ສ້າງສະຖານີອ້າງອີງທາງດ້ານພູມສາດແບບຕໍ່ເນື່ອງ (ຈຸດ cors) ໃຫ້ໄດ້ 1 ຈຸດ; ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມໃຫ້ໄດ້ 1 ແຫ່ງ ແລະ ສ້າງຫຼາວັດແທກນ້ຳເຝົ້າລະວັງໄພໃຫ້ໄດ້ 2 ຈຸດ ແລະ ເກັບກຳຂໍ້ມູນການນຳໃຊ້ນ້ຳໃຕ້ດິນ ແລະ ນ້ຳໜ້າດິນ ໃຫ້ໄດ້ 2 ເມືອງ;
- ສຸມໃສ່ຈັດຕັ້ງປະຕິບັດ 6 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**2.6 ເຕັກໂນໂລຊີ ແລະ ການສື່ສານ**

- ຊຸກຍູ້, ຕິດຕາມ ໃຫ້ບັນດາບໍລິສັດ ໂທລະຄົມມະນາຄົມ ຂະຫຍາຍສັນຍານ ໂທລະສັບ ແລະ ແກ້ໄຂບ້ານທີ່ບໍ່ມີສັນຍານ ໃຫ້ໄດ້ 2 ບ້ານ, ເສີມສະຖານີ 4G ໃຫ້ໄດ້ 20 ຈຸດ ແລະ ຂຶ້ນແຜນລົງສຳຫຼວດຂໍ້ມູນບ້ານທີ່ມີສັນຍານອ່ອນຈຳນວນ 23 ບ້ານ;
- ອອກ, ຕໍ່ໃບອະນຸຍາດບັນດາຫົວໜ່ວຍທຸລະກິດທີ່ໃຫບໍລິການດ້ານໄປສະນີ ແລະ ການສື່ສານ ໃຫ້ໄດ້ຄື: ເລກໝາຍສາຍດ່ວນ 3 ຫຼື 4 ຕົວເລກໃຫ້ໄດ້ 2 ຫົວໜ່ວຍ, ສາຂາ ການບໍລິການ ໄປສະນີ 15 ຫົວໜ່ວຍ, ຫ້າງຮ້ານ ໂທລະຄົມມະນາຄົມ ໃຫ້ໄດ້ 62 ຫົວໜ່ວຍ ແລະ ການນຳໃຊ້ ຄື້ນຄວາມຖີ່ ລະບົບໂຟນີ ໃຫ້ ໄດ້ 6 ຫົວໜ່ວຍ.
- ພັດທະນາຄວາມຮູ້ຄວາມສາມາດໃຫ້ບັນດາຖັນແຖວພະນັກງານລັດ ຂອງພະແນກການ, ອົງການ ກົມກອງອ້ອມຂ້າງແຂວງ ແລະ ບັນດາເມືອງ, ໃຫ້ສາມາດຄຸ້ມຄອງ, ນຳໃຊ້ບໍລິການລະບົບບໍລິຫານລັດດ້ວຍດີຈິຕອນ ໂດຍການຈັດຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ນິຕິກຳດ້ານການຄຸ້ມຄອງ ICT ໃຫ້ບັນລຸ 04 ຊຸດຂຶ້ນໄປ;
- ຊຸກຍູ້ສົ່ງເສີມໃຫ້ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງ ທີ່ມີເງື່ອນໄຂເປີດນຳເວັບໄຊຂອງພາກລັດ (G-Web Platform) ໃຫ້ໄດ້ 03 ເວັບໄຊ;
- ສຸມໃສ່ຈັດຕັ້ງປະຕິບັດ 12 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**3. ຄາດໝາຍດ້ານວັດທະນະທຳ-ສັງຄົມ**

**3.1 ຄາດໝາຍສຶກສາທິການ ແລະ ກິລາ**

- ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ບໍ່ໃຫ້ຫຼຸດ 96,5%;
- ອັດຕາເຂົ້າຮຽນໃໝ່ລວມ ປ.1 ໃຫ້ບັນລຸ 101%;
- ອັດຕາເຂົ້າໃໝ່ສຸດທິ ປ.1 ບໍ່ໃຫ້ຫຼຸດ 99,5%;
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6-10 ປີ) ບໍ່ໃຫ້ລຸດ 99,6%;
- ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸ 101%;
- ອັດຕາປະລະຊັ້ນ ປ 1 ຍັງເຫຼືອ 1,5%;
- ອັດຕາຈົບຊັ້ນປະຖົມ (ອັດຕາເລື່ອນຊັ້ນ-ຈົບຊັ້ນ) ໃຫ້ບັນລຸ 97,3%;
- ອັດຕາຄ້າງຫ້ອງຊັ້ນປະຖົມ ຍັງເຫຼືອ 2%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 (ທຽບໃສ່ນັກຮຽນຕົ້ນປີ ປ.5) ໃຫ້ໄດ້ 92%;
- ດັດສະນີຄວາມສະເໝີພາຍິງ-ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ໃນລະຫວ່າງ (0,97- 1,03);
- ອັດຕາປະລະຊັ້ນປະຖົມ ຍັງເຫຼືອ 1%;



ສະແກນດ້ວຍ CamScanner

- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນໃຫ້ໄດ້ 87%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ບໍ່ໃຫ້ຫຼຸດ 51%;
- ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ບັນລຸ 78%;
- ອັດຕາປະລະມັດທະຍົມຕອນຕົ້ນ ຍັງເຫຼືອ 6,5%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ 1.033 ຄົນ;
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ໃຫ້ໄດ້ 25%;
- ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ໄດ້ 2%;
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະການຫຼິ້ນກິລາເຂົ້າຮ່ວມການສ້າງຂະບວນເພື່ອສຸຂະພາບເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາບຸນປະເພນີ ແລະ ກິລາບຸນວັນສຳຄັນຕ່າງໆຂອງຊາດ-ສາກົນ ບໍ່ໃຫ້ຫຼຸດ 36%.

**3.2 ຄາດໝາຍສາທາລະນະສຸກ**

| | |
|---|---|
| - ອັດຕາສ່ວນເດັກນ້ອຍ ອາຍຸ < 5 ປີ ທີ່ມີນ້ຳໜັກຫຼຸດມາດຖານ | ເທົ່າກັບ 11,5%; |
| - ອັດຕາສ່ວນເດັກນ້ອຍອາຍຸ < 5 ປີ ທີ່ມີລວງສູງຕ່ຳກວ່າມາດຖານ | ເທົ່າກັບ 11,3%; |
| - ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 1 ປີ | ເທົ່າກັບ 9,8%; |
| - ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ | ເທົ່າກັບ 11,1%; |
| - ອັດຕາການຕາຍຂອງແມ່ | ເທົ່າກັບ 79%; |
| - ອັດຕາການເກີດລູກມີແພດຊ່ວຍ | ເທົ່າກັບ 83,3%; |
| - ອັດຕາການສັກຢາກັນພະຍາດໃຫ້ເດັກນ້ອຍອາຍຸ ລຸ່ມ 1 ປີ | ເທົ່າກັບ 95,6%; |
| - ອັດຕາການຊົມໃຊ້ນ້ຳສະອາດ | ເທົ່າກັບ 93,6%; |
| - ອັດຕາການຊົມໃຊ້ວິດຖ່າຍຄອບຄົວ | ເທົ່າກັບ 92%; |
| - ອັດຕາການປົກຄຸມປະກັນສຸຂະພາບ | ເທົ່າກັບ 100%; |
| - ອັດຕາການຮັບຮອງ ແລະ ປະກາດບ້ານແບບຢ່າງສາທາລະນະສຸກ | ເທົ່າກັບ 91,3%. |

**3.3 ຄາດໝາຍຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

- ຜະລິດຂ່າວອອກອາກາດຢູ່ພາຍໃນແຂວງ ແລະ ສົ່ງໃຫ້ສູນກາງ ໃຫ້ໄດ້ 3.250 ຂ່າວ;
- ສ້ອມແປງ ແລະ ປັບປຸງຖ່າຍອຸປະກອນໂທລະໂຄ່ງທີ່ເປ່ເພ ໃຫ້ໄດ້ 5 ບ້ານໃນທົ່ວແຂວງ;
- ຝຶກອົບຮົມທັກສະການຂຽນຂ່າວ ແລະ ເຕັກນິກການຖ່າຍພາບ, ຖ່າຍວິດີໂອໃຫ້ນັກຂ່າວເມືອງ ແລະ ຕາໜ່າງຂ່າວອ້ອມຂ້າງແຂວງໃຫ້ໄດ້ 1 ຄັ້ງ ຄາດຄະເນຜູ້ເຂົ້າຮ່ວມ 30 ຄົນ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 650 ຄອບຄົວ, ສ້າງບ້ານວັດທະນະທຳ ໃຫ້ໄດ້ 5 ບ້ານ, ສ້າງກົມກອງວັດທະນະທຳ ໃຫ້ໄດ້ 45 ກົມກອງ ແລະ ສ້າງບ້ານວັດທະນະທຳແບບຢ່າງຕິດພັນກັບການທ່ອງທ່ຽວ ໃຫ້ໄດ້ 1 ບ້ານ;
- ອະນຸລັກ ແລະ ສົ່ງເສີມທາງດ້ານວັດທະນະທຳ ແລະ ຂົນທະນຽມນິລະມິດທ້ອງຖິ່ນ ໃຫ້ໄດ້ 2 ແຫ່ງ;
- ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວ ທີ່ເປັນບູລິມະສິດຂອງແຂວງ ໃຫ້ໄດ້ 1 ແຫ່ງ;



Scanned with CamScanner

- ດຶງດູດນັກທ່ອງທ່ຽວເຂົ້າມາແຂວງໄຊຍະບູລີ ໃຫ້ໄດ້ 100.000 ຄົນ ແລະ ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ 2.5 ລ້ານໂດລາສະຫະລັດ ແລະ ຝຶກອົບຮົມໃຫ້ພະນັກງານທີ່ເຮັດວຽກບໍລິການດ້ານການທ່ອງທ່ຽວ ໃຫ້ໄດ້ 70 ຄົນຂຶ້ນໄປ;
- ຕິດຕັ້ງປ້າຍໂຄສະນາການທ່ອງທ່ຽວຂອງແຂວງ ໃຫ້ໄດ້ 3 ດ່ານສາກົນ ຄື: ດ່ານປາງມອນ ເມືອງຄອບ , ດ່ານສາກົນນ້ຳເງິນ ເມືອງເງິນ ແລະ ດ່ານສາກົນນ້ຳເຫືອງ ເມືອງແກ່ນທ້າວ.
- ສຸມໃສ່ຈັດຕັ້ງປະຕິບັດ 3 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**3.4 ຄາດໝາຍແຮງງານ ແລະ ສະຫວັດດີການ-ສັງຄົມ**

- ສູ້ຊົນເຮັດໃຫ້ກຳລັງແຮງງານລາວໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ເພື່ອຕອບສະໜອງໃຫ້ແກ່ການພັດທະນາຕາມຂະແໜງການ ແລະ ໂຄງປະກອບເສດຖະກິດໃຫ້ໄດ້ 300 ຄົນ, ໃນນີ້ ກະສິກຳ 50 ຄົນ, ອຸດສາຫະກຳ 150 ຄົນ, ບໍລິການ 100 ຄົນ ແລະ ທົດສອບສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 15 ຄົນ;
- ສູ້ຊົນຈັດຫາງານພາຍໃນໃຫ້ກຳລັງແຮງງານລາວເຂົ້າເຮັດວຽກໃຫ້ໄດ້ 2.500 ຄົນ, ໃນນີ້ ກະສິກຳ 1.100 ຄົນ, ອຸດສາຫະກຳ 900 ຄົນ, ບໍລິການ 500 ຄົນ;
- ຂຶ້ນທະບຽນໃຫ້ຜູ້ປະກັນຕົນໃໝ່ ແລະ ຈ່າຍເງິນສົມທົບໃຫ້ໄດ້ 1.000 ຄົນ, ໃນນີ້ຜູ້ປະກັນຕົນພາກລັດ ໃຫ້ໄດ້ 220 ຄົນ, ພາກວິສາຫະກິດ 700 ຄົນ ແລະ ຜູ້ສະໝັກໃຈ 80 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍ ຕາມດຳລັດ 272/ລບ ໃຫ້ຜູ້ທີ່ມີຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ໃຫ້ໄດ້ 33 ທ່ານ;
- ຂະຫຍາຍຕາໜ່າງປົກປ້ອງເດັກ ຂັ້ນບ້ານ ໃຫ້ໄດ້ 25 ບ້ານ;
- ປຸກລະດົມທຶນເຂົ້າກອງທຶນຄຸ້ມຄອງໄພພິບັດໃຫ້ໄດ້ 600 ລ້ານກີບ.;
- ຊຸກຍູ້ສ້າງ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານ ທີ່ມີຄວາມສ່ຽງໄພພິບັດສູງ ໃຫ້ໄດ້ 25 ບ້ານ;
- ຊ່ວຍເຫຼືອຜູ້ອອກຢາເສບຕິດ ໃຫ້ໄດ້ 100 ຄົນ;
- ສ້າງບ້ານພັດທະນາດ້ານ ແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ໄດ້ 70 ບ້ານ.
- ສຸມໃສ່ຈັດຕັ້ງປະຕິບັດ 4 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**3.5 ຄາດໝາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ**

- ສູ້ຊົນສ້າງບ້ານພົ້ນທຸກໃຫ້ໄດ້ 8 ບ້ານ, ເມືອງພົ້ນທຸກໃຫ້ໄດ້ 1 ເມືອງ, ລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 732 ຄອບຄົວ, ສ້າງຄອບຄົວພັດທະນາໃຫ້ໄດ້ 1.000 ຄອບຄົວ;
- ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃຫ້ໄດ້ 1 ຈຸດ ບ້ານທອງ ເມືອງເງິນ; ສ້າງບ້ານແບບຢ່າງທາງດ້ານກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 6 ບ້ານຢູ່ເມືອງພຽງ;
- ສົ່ງເສີມກະສິກຳແບບຍືນຍົງ 79 ກຸ່ມ, ສ້າງຕັ້ງກຸ່ມຜະລິດກະສິກຳ ໃຫ້ໄດ້ 100 ກຸ່ມ, ຈາກໂຄງການຊົນລະທານສດ 21 ກຸ່ມ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023**



Scanned with CamScanner

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 3 ມາດຕະການ ຕາມການສະເໜີ ຂອງອົງການປົກຄອງແຂວງ, ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການ ດັ່ງກາວ, ກອງປະຊຸມສະເໜີ ບາງມາດຕະການເພີ່ມເຕີມ ດັ່ງນີ້:

- ເອົາໃຈໃສ ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເປັນວຽກບຸລິມະສິດຂອງແຜນພັດທະນາເສດ ຖະກິດ-ສັງຄົມຂອງແຂວງ ໃຫ້ມີຄວາມຄືບໜ້າຫຼາຍຂຶ້ນ, ຮັບປະກັນການປະຕິບັດ 3 ຫຼັກການ ຂອງວາລະແຫ່ງຊາດ ຄື: ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ;
- ເອົາໃຈໃສ ປະຕິບັດຄາດໝາຍໃນຂົງເຂດເສດຖະກິດ ເປັນຕົ້ນ ຊຸກຍູ້ສົ່ງເສີມ ການຜະລິດພາຍ ໃນຕິດພັນກັບການປຸງແຕ່ງ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ
- ສົ່ງເສີມການປະຢັດມັດທະຍັດ ແລະ ຄຸ້ມຄອງລາຄາ ສິນຄ້າອຸປະໂພກ-ບໍລິໂພກທີ່ຈຳເປັນຮັບໃຊ້ຊີວິດປະຈຳວັນ, ທັນເປັນທັນສະໄໝ ໃນການຊຳລະສະສາງ ຜ່ານລະບົບທະນາຄານ; ຄຸ້ມຄອງການຈັດ ເກັບລາຍຮັບ ແລະ ລາຍຈ່າຍໃຫ້ມີປະສິດທິຜົນ; ຮີບຮ້ອນເກັບກູ້ເງິນທີ່ກວດເຫັນ ເພີ່ມຈາກຜົນການ ກວດສອບ ແລະ ກວດກາລັດ ໃນໄລຍະຜ່ານ ມາໃຫ້ສຳເລັດຂາດຕົວ;
- ເອົາໃຈໃສ ຄຸ້ມຄອງການລົງທຶນຂອງລັດ ຢ່າງເຂັ້ມງວດ, ລົງທຶນຕາມຄວາມສາມາດໃນການຊຳລະສະສາງເປັນຫຼັກ; ການຈັດສັນໂຄງການລົງທຶນຂອງລັດ ຕ້ອງຮັບປະກັນການມີສ່ວນຮ່ວມແຕ່ຫົວທີ ຂອງສະພາປະຊາຊົນຂັ້ນແຂວງ;
- ຮີບຮ້ອນສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງຫຼວງຂອງແຂວງ ແລະ ເມືອງ ທີ່ເປເພ; ເພີ່ມທະວີການຕິດຕາມກວດກາ, ປະເມີນຜົນ ແລະ ແກ້ໄຂຜົນກະທົບຈາກ ໂຄງການ ພັດທະນາຕ່າງໆ ຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
- ປະເມີນຄືນບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ແບບທົດລອງ, ຮັບປະກັນ ການຈັດຕັ້ງປະຕິບັດໂຄງການທົດລອງທີ່ໄດ້ຮັບອະນຸຍາດຜ່ານມາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຫຼີກລ່ຽງການອະນຸຍາດ ການຂຸດຄົ້ນແຮທາດອື່ນ ທີ່ບໍ່ໄດ້ຢູ່ໃນໂຄງການທົດລອງ;
- ສືບຕໍ່ເອົາໃຈໃສ ປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ, ທີ່ບໍ່ທັນບັນລຸຄາດໝາຍ; ສົ່ງເສີມພາກສ່ວນທຸລະກິດສືບຕໍ່ລົງທຶນ ພັດທະນາພື້ນຖານໂຄງລ່າງ, ອະນຸລັກ ແລະ ຟື້ນຟູ ແຫຼ່ງທ່ອງທ່ຽວ ຢ່າງມີຈຸດສຸມ, ລະດົມການປະກອບສ່ວນສ້າງ ແລະ ສ້ອມແປງເສັ້ນທາງ ເຂົ້າສູ ແຫຼ່ງທ່ອງທ່ຽວ ທີ່ເປັນເປົ້າໝາຍ;
- ເອົາໃຈໃສ ປະເມີນຄວາມຄືບໜ້າ ແລະ ປະຕິບັດວຽກຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ເມືອງພົ້ນທຸກ ທີ່ໄດ້ກຳນົດໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;
- ເອົາໃຈໃສ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ໃນຂົງເຂດຕ່າງໆໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນໃຫ້ການຄຸ້ມຄອງບໍລິຫານລັດ ດ້ວຍກົດໝາຍ ມີຜົນສັກສິດ, ແນໃສ່ ຮັບປະກັນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ ໃຫ້ໄປຕາມກົດໝາຍ, ຕາມຫຼັກການ ເດັດຂາດ, ໂປ່ງໃສ ແລະ ມືອາຊີບ ປະຕິບັດມາດຕະການເດັດຂາດຕໍ່ຫົວໜ່ວຍ ງົບປະມານ ທີ່ລະເມີດວິໄນ ແຜນການ-ການເງິນ.



ສແກນດ້ວຍ CamScanner

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຊຸກຍູ້ຕິດຕາມການຈັດສັນບັນຊີໂຄງການລົງທຶນ ປີ 2023 ໂດຍໃຫ້ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ປະສານສົມທົບກັບພະແນກ ແຜນການ ແລະ ການລົງທຶນແຂວງ ໃຫ້ສຳເລັດ ພາຍໃນ ເດືອນກຸມພາ ປີ 2023;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ຢູ່ບັນດາເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິ ສະບັບນີ້ ມີຜົນສັກສິດນັບແຕ່ ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງບີລັນ ຄຳພັນເພັງ

สแกนด้วย CamScanner